# ເສັ້ນທາງລົດໄຟ ລາວ-ຈີນ ໄດ້ອຳນວຍຄວາມສະດວກໃນການຮຽນຮູ້ເຊິ່ງ ກັນ ແລະ ກັນ ລະຫວ່າງອະລິຍາທຳ ລາວ-ຈີນ

ລະຫວ່າງວັນທີ 10 ຫາ 11 ກໍລະກົດນີ້, ກອງປະຊຸມລະດັບລັດຖະມົນຕີວ່າດ້ວຍການສົນທະນາອະລິຍະທຳທົ່ວໂລກໄດ້ຈັດຂຶ້ນຢູ່ນະຄອນຫຼວງປັກກິ່ງ ສປ ຈີນ. ການແລກປ່ຽນ, ການເຊື່ອມໂຍງເຂົ້າກັນ, ການຮຽນຮູ້ນຳກັນ ແລະ ການຖອດຖອນບົດຮຽນເຊິ່ງກັນ ແລະ ກັນ ລະຫວ່າງອະລິຍະທຳ ເປັນເສັ້ນທາງທີ່ຕ້ອງເດີນຜ່ານ ເພື່ອເຮັດໃຫ້ໂລກມີອະນາຄົດທີ່ສວຍງາມກວ່າເກົ່າ ແລະ ຊີວິດການເປັນຢູ່ຂອງປະຊາຊົນປະເທດຕ່າງໆ ນັບມື້ນັບດີຂຶ້ນ. ຢູ່ລະຫວ່າງລາວ ແລະ ຈີນ, ນັບແຕ່ໄດ້ເປີດນຳໃຊ້ເສັ້ນທາງລົດໄຟ ລາວ-ຈີນ ເປັນຕົ້ນມາ, ຄົນນັບມື້ນັບຫຼາຍໄດ້ຂີ່ຂະບວນລົດໄຟຕາມເສັ້ນທາງລົດໄຟສາຍນີ້ ເດີນທາງລະຫວ່າງສອງປະເທດ, ໃນຂະນະທີ່ຊົມໃຊ້ໝາກຜົນແຫ່ງການຮ່ວມມືລະຫວ່າງສອງປະເທດ ເຊັ່ນ: ເສັ້ນທາງລົດໄຟ ລາວ-ຈີນ ເປັນຕົ້ນ, ພວກເຂົາເຈົ້າກໍໄດ້ເປັນສັກຂີພິຍານ, ເຂົ້າຮ່ວມ, ຊຸກຍູ້ການແລກປ່ຽນ ແລະ ການຮຽນຮູ້ນຳກັນລະຫວ່າງອະລິຍະທຳ.



## ເປັນທຸລະກິດ, ຍິ່ງເປັນການສົນທະນາລະຫວ່າງອະລິຍະທຳ

ເດືອນມິຖຸນາຜ່ານມາ, ຢູ່ດິນແດນທີ່ກວ້າງໃຫຍ່ໄພສານຂອງແຂວງບໍລິຄຳໄຊ, ມີສວນໝາກມ່ວງທີ່ມີເນື້ອທີ່ 200 ກວ່າເຮັກຕາທີ່ຂຽວອຸ່ມທຸ່ມ. ທ່ານ ເຢ້ຢ້າວສຽນ ຊາວຈີນ ທີ່ໄດ້ມາປູກໝາກມ່ວງຢູ່ແຫ່ງນີ້ ໄດ້ສ້າງພາລະກິດທີ່ເຕັມໄປດ້ວຍສິ່ງທ້າທາຍ ແລະ ຄວາມຫວັງຕະຫຼອດໄລຍະສິບກວ່າປີ. ສວນໝາກມ່ວງຂອງທ່ານບໍ່ພຽງແຕ່ໄດ້ກາຍເປັນ "ເຄັດລັບສ້າງຄວາມຮັ່ງມີ" ຂອງທ້ອງຖິ່ນເທົ່ານັ້ນ, ຫາກຍັງໄດ້ສ່ອງແສງໃຫ້ເຫັນເຖິງການສົນທະນາລະຫວ່າງອະລິຍະທຳລາວ ແລະ ຈີນຢ່າງມີຊີວິດຊີວາ.

ປີ 2012, ທ່ານ ເຢ້ຢ້າວສຽນ (Ye Yaoqian) ໄດ້ນຳເອົາເຕັກນິກປູກໝາກມ່ວງທີ່ທັນສະໄໝເດີນທາງມາເຖິງປະເທດລາວ. ເມື່ອຫາກໍ່ເດີນທາງມາເຖິງປະເທດລາວ, ການດຳລົງຊີວິດຢູ່ລາວລຳບາກຫຼາຍ ຍ້ອນທ່ານບໍ່ໄດ້ພາສາລາວ ແລະ ບໍ່ຮູ້ວັດທະນະທຳລາວ. ປັດຈຸບັນ, ສວນໝາກມ່ວງຂອງທ່ານສາມາດຜະລິດໝາກມ່ວງທີ່ມີຄຸນນະພາບດີ 3.000 ໂຕນຕໍ່ປີ, ຍັງໄດ້ອົບຮົມບົ່ມສ້າງ ທ່ານ ຈັນທະວົງ ຜູ້ມີສີມືທີ່ດີໃນການປູກໝາກມ່ວງຊາວລາວ. ທ່ານ ຈັນທະວົງ ເຄີຍເປັນຜູ້ແປພາສາ ໂດຍໄດ້ຖອດຖອນບົດຮຽນດ້ານການຄຸ້ມຄອງ ແລະ ເຕັກນິກປູກຝັງ, ປັດຈຸບັນ, ທ່ານ ຈັນທະວົງ ສາມາດຄຸ້ມຄອງສວນໝາກມ່ວງທີ່ມີເນື້ອທີ່ປະມານ 7 ເຮັກຕາ.

ທ່ານ ອະນຸສັກ ແພງທິມມະວົງ ຮອງຫົວໜ້າກົມພັດທະນາຊົນນະບົດ, ກະຊວງກະສິກຳ ແລະ ສິ່ງແວດລ້ອມແຫ່ງ ສປປ ລາວ ກ່າວວ່າ: "ນັກລົງທຶນຈີນບໍ່ພຽງແຕ່ໄດ້ມາລົງທຶນຢູ່ລາວເທົ່ານັ້ນ, ສິ່ງທີ່ສຳຄັນກວ່ານັ້ນແມ່ນ, ນັກລົງທຶນຈີນໄດ້ນຳເອົາເຕັກນິກທັນສະໄໝ ແລະ ບົດຮຽນດ້ານການຄຸ້ມຄອງມານຳໃຊ້ຢູ່ລາວ ເຊິ່ງມີຄວາມໝາຍສຳຄັນໃນການຍົກລະດັບຄວາມທັນສະໄໝດ້ານກະສິກຳຂອງລາວ." ທ່ານກ່າວຕື່ມອີກວ່າ: ລາວຍິນດີຕ້ອນຮັບນັກລົງທຶນແບບນີ້.

ວັນທີ 4 ມິຖຸນາ 2025, ພຽງແຕ່ 24 ຊົ່ວໂມງເທົ່ານັ້ນ, ໝາກມ່ວງທີ່ມີຄຸນນະພາບດີຫຼາຍສິບໂຕນຂອງ ທ່ານ ເຢ້ຢ້າວສຽນ ຖືກຂົນສົ່ງຈາກນະຄອນຫຼວງວຽງຈັນໄປເຖິງນະຄອນຄຸນໝິງຂອງຈີນ ດ້ວຍຂະບວນລົດໄຟແຊ່ເຢັນ "ຂະບວນສາຍດ່ວນລ້ານຊ້າງ-ແມ່ຂອງ" ຕາມເສັ້ນທາງລົດໄຟລາວ-ຈີນ ເຊິ່ງໄດ້ປະຢັດເວລາ 3 ວັນເຕັມໆ ເມື່ອທຽບໃສ່ການຂົນສົ່ງແບບດັ້ງເດີມ. ເສັ້ນທາງລົດໄຟສາຍນີ້ບໍ່ພຽງແຕ່ໄດ້ປະຢັດເວລາໃນການຂົນສົ່ງສິນຄ້າເທົ່ານັ້ນ, ຫາກຍັງໄດ້ເພີ່ມຄວາມເຂົ້າໃຈກັນລະຫວ່າງປະຊາຊົນສອງຊາດລາວ ແລະ ຈີນອີກດ້ວຍ.

ທ່ານ ເຢ້ຢ້າວສຽນ ເຫັນວ່າ: ການປູກໝາກມ່ວງບໍ່ພຽງແຕ່ເປັນທຸລະກິດເທົ່ານັ້ນ, ຫາກຍັງເປັນການສົນທະນາລະຫວ່າງອະລິຍະທຳອີກດ້ວຍ. ຈາກການບໍ່ສາມາດເຂົ້າໃຈພາສາກັນໃນເບື້ອງຕົ້ນຈົນເຖິງການປະສານສົມທົບຢ່າງກົມກຽວກັນໃນປັດຈຸບັນ, ຈາກການສົ່ງອອກເຕັກນິກແຕ່ຝ່າຍດຽວ ເຖິງການແລກປ່ຽນວັດທະນະທຳເຊິ່ງກັນ ແລະ ກັນ, ສວນໝາກມ່ວງແຫ່ງນີ້ໄດ້ເປັນສັກຂີພິຍານໃຫ້ແກ່ການບັນລຸການພັດທະນາຮ່ວມກັນຂອງສອງປະເທດ ບົນພື້ນຖານເຄົາລົບເຊິ່ງກັນ ແລະ ກັນ.



## ພວກເຮົາມີທ່າທີເປີດກວ້າງ ແລະ ກວມລວມກວ່າເກົ່າ

ນັບແຕ່ວັນທີ 26 ຫາ 29 ມິຖຸນາຜ່ານມາ, ນັກສຶກສາຕ່າງປະເທດທີ່ມາຮຽນຕໍ່ຢູ່ຈີນຈາກ 10 ປະເທດ ເຊັ່ນ: ລາວ, ຫວຽດນາມ, ກຳປູເຈຍ, ໄທ ແລະ ໂຮນລັງເປັນຕົ້ນ ໄດ້ຂີ່ລົດໄຟເດີນທາງອອກຈາກສະຖານີຄຸນໝິງໃຕ້ ແລະ ເດີນທາງໄປເຖິງສິບສອງພັນນາຕາມເສັ້ນທາງລົດໄຟລາວ-ຈີນ ເພື່ອເຂົ້າຮ່ວມກິດຈະກຳ "ສຳຜັດການພັດທະນາຈີນ ກໍຄືການພັດທະນາຂອງສິບສອງພັນນາ" ປີ 2025 ຂອງມະຫາວິທະຍາໄລວິທະຍາສາດເຕັກໂນໂລຊີ ຄຸນໝິງ.

ໃນພິທີເປີດກິດຈະກຳ, ນັກສຶກສາທັງຫຼາຍໄດ້ດຳເນີນການແລກປ່ຽນກັນໂດຍປິ່ນອ້ອມເສັ້ນທາງລົດໄຟລາວ-ຈີນ. ດຣ.ລິວຕາເວີຍ ຈາກລາວ ໄດ້ແນະນຳຂະບວນການພັດທະນາ ແລະ ຄວາມໝາຍຂອງເສັ້ນທາງລົດໄຟລາວ-ຈີນ; ດຣ. ຈາກໄທ ໄດ້ມີຄວາມປາຖະໜາຢ່າງຍິ່ງຕໍ່ເສັ້ນທາງລົດໄຟຂ້າມອາຊີທີ່ຈະສ້າງຂຶ້ນໃນອະນາຄົດ; ຫຼີຊິງ ຈາກສີລັງກາກ່າວວ່າ: "ດຣ.ລິວຕາເວີຍໄດ້ແນະນຳໂຄງການເສັ້ນທາງລົດໄຟລາວ-ຈີນເປັນຢ່າງດີ ເຊິ່ງເຮັດໃຫ້ຂ້າພະເຈົ້າໄດ້ຮັບຮູ້ຢ່າງເລິກເຊິ່ງ ຕໍ່ຄວາມໝາຍແຫ່ງການຮ່ວມມືລະຫວ່າງປະເທດ ແລະ ການສ້າງສາພື້ນຖານໂຄງລ່າງທີ່ທັນສະໄໝ."

ຢູ່ສິບສອງພັນນາ, ນັກສຶກສາທັງຫຼາຍໄດ້ໄປທັດສະນະສຶກສາຢູ່ສວນຊາ ແລະ ຮັບຮູ້ເຖິງ "ໃບຊານ້ອຍໆ" ຈະສາມາດສ້າງຕ່ອງໂສ້ອຸດສາຫະກຳສ້າງຄວາມຈະເລີນຮຸ່ງເຮືອງຢູ່ຊົນນະບົດໄດ້ຄືແນວໃດ; ຍັງໄດ້ໄປທັດສະນະສຶກສາຢູ່ສວນພືດເຂດຮ້ອນສິບສອງພັນນາຂອງສະພາບັນດິດວິທະຍາສາດຈີນ ເພື່ອຮັບຮູ້ຄວາມລຶກລັບຂອງທຳມະຊາດ; ເດີນທາງໄປຢ້ຽມຢາມບ້ານເຜົ່າກິໂນ ເພື່ອຮຽນແບບຟ້ອນກອງໃຫຍ່ກິໂນ ທີ່ເປັນມໍລະດົກວັດທະນະທຳນາມມະທຳລະດັບຊາດຂອງຈີນ; ເດີນທາງໄປຢ້ຽມຢາມໝູ່ບ້ານເຜົ່າໄທລື້ ເພື່ອຮັບຮູ້ສີມືເຮັດຄຳພີໃບລານ ແລະ ສີມືເຮັດເຄື່ອງປັ້ນດິນເຜົາ ທີ່ເປັນມໍລະດົກວັດທະນະທຳນາມມະທຳ ພ້ອມທັງຍັງໄດ້ຮຽນພາສາໄທລື້ໄປພ້ອມກັນອີກດ້ວຍ.

ເສັ້ນທາງລົດໄຟລາວ-ຈີນ ເປັນເສັ້ນທາງຕົວຈິງ ແລະ ກໍເປັນສາຍພານແຫ່ງການແລກປ່ຽນ ແລະ ຮຽນຮູ້ລະຫວ່າງອະລິຍະທຳອີກດ້ວຍ. ທ່ານ ຈາກລາວກ່າວວ່າ: "ຂ້າພະເຈົ້າໄດ້ຮັບຮູ້ເຖິງຄວາມໝາຍແຫ່ງການຮຽນຮູ້ວັດທະນະທຳເຊິ່ງກັນແລະກັນຢ່າງເລິກເຊິ່ງຈາກກິດຈະກຳຄັ້ງນີ້. ໂດຍຜ່ານຈາກການຮຽນຮູ້ເຊິ່ງກັນ ແລະ ກັນແບບນີ້, ເຮັດໃຫ້ພວກເຮົາມີທ່າທີເປີດກວ້າງກວ່າເກົ່າ ແລະ ກວມລວມກວ່າເກົ່າ."

## ໃຫ້ຂ້ອຍຟັງເຂົ້າໃຈພາສາຂອງທ່ານ

ໃນລະດູຮ້ອນ, ຢູ່ຮ້ານຂາຍປຶ້ມໂກເມີນບ້ານແລ້, ເມືອງຫຼ້າ ເຂດຊາຍແດນຈີນ-ລາວ ໄດ້ຈັດກິດຈະກຳອ່ານປຶ້ມພິເສດ ເຊິ່ງໄດ້ດຶງດູດຊາວໜຸ່ມສອງປະເທດຈີນ ແລະ ລາວເຂົ້າຮ່ວມເປັນຈຳນວນຫຼວງຫຼາຍ.

ນາງ ມະນີຈັນ ອິນທະຂັນ ນັກສຶກສາລາວໄດ້ອ່ານບົດກະວີທີ່ພາດຫົວຂໍ້ "ເຈົ້າແມ່ນເດືອນເມສາເມືອງຄົນ" ຂອງນາງ ລິນຮຸຍຢິນ ນາຍຊ່າງກໍ່ສ້າງ ແລະ ນັກປະພັນສະໄໝໃໝ່ຂອງຈີນ ທີ່ມີເນື້ອໃນວ່າ: "ເຈົ້າແມ່ນດອກໄມ້ເບັ່ງບານທີ່ງົດງາມ, ແມ່ນສຽງນົກແອ່ນທີ່ອອນຊອນ. ເຈົ້າແມ່ນຄວາມຮັກ, ແມ່ນຄວາມອົບອຸ່ນ, ແມ່ນຄວາມຫວັງ..." ເຖິງແມ່ນວ່າພາສາຈີນຂອງນາງຍັງບໍ່ຄ່ອຍຫຼຽນໄຫຼປານໃດ, ແຕ່ກໍເຕັມໄປດ້ວຍຄວາມຈິງໃຈ ເຊິ່ງໄດ້ຮັບສຽງຕົບມືຈາກຄົນທັງຫຼາຍ. ນາງກ່າວວ່າ: "ຈັງຫວະ ແລະ ບັນຍາກາດຂອງບົດກະວີຈີນເຮັດໃຫ້ຂ້າພະເຈົ້າຕິດໃຈນຳຫຼາຍ." ນາງ ມະນີຈັນ ອິນທະຂັນ ມາຈາກເມືອງຕົ້ນເຜິ້ງ ແຂວງບໍ່ແກ້ວ, ນາງໄດ້ຜູກມິດສຳພັນທີ່ເລິກເຊິ່ງກັບອາຈານ ແລະ ນັກສຶກສາຈີນໃນໄລຍະຮຽນຢູ່ເມືອງຫຼ້າ.

ທ້າວ ສີທອງ ຈາກເມືອງລອງ ແຂວງຫຼວງນ້ຳທາ ໄດ້ເຂົ້າຮ່ວມກິດຈະກຳດັ່ງກ່າວເປັນຄັ້ງທຳອິດ, ລາວໄດ້ຮູ້ສຶກກະຕຸ້ນໃຈຫຼາຍນຳເນື້ອເພງຂອງເພງ "ຝົນເຊົາແລ້ວຈະມີແດດອອກ", ລາວເວົ້າວ່າ: "ຕົວໜັງສືໄດ້ເຕັມໄປດ້ວຍພະລັງທີ່ແຂງແຮງປານນີ້!" ທ້າວ ສີທອງ ກຽມຈະປະກອບສ່ວນເຂົ້າໃນການຮ່ວມມືລາວ-ຈີນໃນອະນາຄົດ, ລາວເວົ້າວ່າ: "ຢາກສ້າງຂົວດ້ວຍຕົວໜັງສື ເພື່ອເຮັດໃຫ້ຊາວໜຸ່ມສອງປະເທດນັບມື້ນັບມີຄວາມໃກ້ຊິດກວ່າເກົ່າ." ໃນກິດຈະກຳ, ຊາວໜຸ່ມສອງປະເທດ ລາວ ແລະ ຈີນ ໄດ້ຮ້ອງເພງ "ໃຫ້ຂ້ອຍຟັງເຂົ້າໃຈພາສາຂອງທ່ານ" ທີ່ເປັນເພງອະມະຕະຂອງສິບສອງພັນນາ, ສ່ວນທຳນອງທີ່ມ່ວນຊື່ນຂອງເພງ "ສາວຊຽງຂວາງ" ກໍໄດ້ດຶງດູດຊາວໜຸ່ມທັງຫຼາຍມາຟ້ອນນຳກັນ.

ຄະນະຊາວບ້ານ ບ້ານແລ້ ໄດ້ຈັດກິດຈະກຳອ່ານປຶ້ມ 30 ກວ່າຄັ້ງ ເພື່ອເພີ່ມທະວີການແລກປ່ຽນລະຫວ່າງປະຊາຊົນເຂດຊາຍແດນລາວ-ຈີນ ໂດຍໄດ້ໃຫ້ບໍລິການແກ່ຜູ້ອ່ານທັງລາວ ແລະ ຈີນ ທັງໝົດ 2.000 ກວ່າຄົນແລ້ວ.

ແຫຼ່ງຂ່າວ: ໜັງສືພິມລາຍວັນຢຸນນານ, ໜັງສືພິມລາຍວັນປະຊາຊົນ

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

ynzhanba@163.com
laos.yunnangateway.com

